ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ

ເລກທີ 1676/ຫລບ.ກສສ

ນະຄອນຫຼວງວຽງຈັນ, ວັນທີ 1-11-2013

ກະຊວງ ກະສິກຳ ແລະ ປ່າໄມ້
ຮອດ ເລກທີ 4225
ວັນທີ 06-11-13
ເວລາ

**ແຈ້ງການ**

ຮຽນ: - ທ່ານ ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້.
- ທ່ານ ລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ.
- ທ່ານ ລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່.
- ທ່ານ ລັດຖະມົນຕີວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາ ທ່ານເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ທິດຊີ້ນຳຂອງກົມການເມືອງສູນກາງພັກ ກ່ຽວກັບການຈັດຕັ້ງປະຕິບັດ ຄຳສັ່ງເລກທີ 13/ ນຍ, ລົງວັນທີ 11 ມິຖຸນາ 2012 ວ່າດ້ວຍການໂຈະການພິຈາລະນາ ແລະ ອະນຸຍາດໂຄງການລົງທຶນໃໝ່ ສຳລັບການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ, ການປູກຢາງພາລາ ແລະ ໄມ້ວິກ ໃນຂອບເຂດທົ່ວປະເທດ.

- ອີງຕາມແຈ້ງການ ສະບັບເລກທີ 467/ຫສພ, ລົງວັນທີ 10 ຕຸລາ 2013 ຂອງຫ້ອງວ່າການສູນກາງພັກ.
- ອີງຕາມການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 14 ຕຸລາ 2013.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງກົມການເມືອງສູນກາງພັກ ແລະ ທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: " 1/-ໃຫ້ໂຈະການອະນຸມັດການສຳຫຼວດ, ຂຸດຄົ້ນ ແລະ ຂຸດຄົ້ນແຮ່ທາດທຸກຊະນິດໃນຂອບເຂດທົ່ວປະເທດ. ກໍລະນີເຫັນມີຄວາມຈຳເປັນ ຕ້ອງອະນຸຍາດ ເພື່ອມີລາຍຮັບມາພັດທະນາທ້ອງຖິ່ນ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ກໍ່ຄືເພື່ອສະໜອງໃຫ້ແກ່ອຸດສາຫະກຳພາຍໃນປະເທດ (ເປັນຕົ້ນແມ່ນວັດຖຸດິບສຳລັບສະໜອງໃຫ້ແກ່ໂຮງງານຊີມັງ ແລະ ອື່ນໆ) ແມ່ນໃຫ້ສະເໜີລັດຖະບານ ເພື່ອນຳສະເໜີຕໍ່ກົມການເມືອງ ພິຈາລະນາຕົກລົງ. ນັບແຕ່ນີ້ເປັນຕົ້ນໄປ ທຸກການອະນຸຍາດກ່ຽວກັບການສຳຫຼວດ, ຂຸດຄົ້ນ ແລະ ຂຸດຄົ້ນ ແຮ່ທາດຕ່າງໆນັ້ນ ໃຫ້ຄົ້ນຄວ້າລະອຽດສະເໜີລັດຖະບານ ເພື່ອນຳຜ່ານກອງປະຊຸມກົມການເມືອງກ່ອນຈຶ່ງຕົກລົງໄດ້.

2/-ໃຫ້ແຂວງທີ່ມີໂຄງການຂຸດຄົ້ນຄຳຕົກຂ້ອນ ຮີບຮ້ອນຢຸດຕິ ຢ່າງສິ້ນເຊີງ ການຂຸດຄົ້ນຄຳຕົກຂ້ອນ ຕາມແມ່ນ້ຳລຳເຊຕ່າງໆ ໃນຂອບເຂດທົ່ວປະເທດ ເພາະມີຜົນກະທົບຢ່າງຮ້າຍແຮງຕໍ່ສະພາບແວດລ້ອມ ກໍ່ຄືການດຳລົງຊີວິດຂອງປະຊາຊົນ. ໃນກໍລະນີຢູ່ທ້ອງຖິ່ນໃດ, ບໍລິສັດໃດ ບໍ່ປະຕິບັດຕາມ ແມ່ນມອບໃຫ້ພາກສ່ວນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຜູ້ແກ້ໄຂຢ່າງຂາດຕົວ.

3/-ມອບໃຫ້ຄະນະສະເພາະກິດ ເພື່ອກວດກາການຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ກວດກາຄືນບັນດາໂຄງການບໍ່ແຮ່ທີ່ໄດ້ອະນຸຍາດ ຜ່ານມາ (ກ່ອນມີຄຳສັ່ງເລກທີ 13/ນຍ,

3/-ມອບໃຫ້ຄະນະສະເພາະກິດ ເພື່ອກວດກາການຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 13/ນຍ. ລົງວັນທີ 11 ມິຖຸນາ 2012 ກວດກາຄືນບັນດາໂຄງການບໍ່ແຮ່ທີ່ໄດ້ອະນຸຍາດ ຜ່ານມາ (ກ່ອນມີຄຳສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012), ຖ້າເຫັນວ່າໂຄງການໃດບໍ່ມີປະສິດທິຜົນ ຫຼື ເຮັດບໍ່ໄປບໍ່ມາ ແມ່ນຕ້ອງສະເໜີລັດຖະບານລົບລ້າງ ຢ່າງຂາດຕົວ. ເດັດຂາດບໍ່ອະນຸຍາດໃຫ້ບຸກຄົນໃດໜຶ່ງ ໄປວິ້ງເຕັ້ນ ເປັນນາຍໜ້າ, ຈັບຈອງໂຄງການເພື່ອຂາຍຕໍ່ ຫຼື ດ້ວຍຮູບການອື່ນໆ ທີ່ພາໃຫ້ປະເທດຊາດເສຍຜົນປະໂຫຍດ.

4/- ທຸກໆໂຄງການດ້ານບໍ່ແຮ່ ທີ່ລັດຖະບານ ໄດ້ອະນຸຍາດ ພາຍຫຼັງມີຄຳສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ແລ້ວນັ້ນ ກໍ່ໃຫ້ໂຈະການຈັດຕັ້ງປະຕິບັດເສຍກ່ອນ ແລະ ໃຫ້ກະຊວງແຜນການ ແລະ ການລົງທຶນ ນຳບັນດາໂຄງການເຫຼົ່ານັ້ນມາລາຍງານຄືນລັດຖະບານ ເພື່ອສະເໜີກົມການເມືອງ ພິຈາລະນາ ແລະ ມີທິດຊີ້ນຳຕື່ມ.

5/- ສຳລັບການອະນຸຍາດສຳປະທານທີ່ດິນ ເພື່ອປູກຢາງພາລາ ແລະ ໄມ້ວິກ ກໍ່ໃຫ້ສືບຕໍ່ຢຸດຕິ ຢ່າງຂາດຕົວ ຕາມຄຳສັ່ງ ເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2013. ”

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈແຈ້ງການສະບັບນີ້ດ້ວຍ. ຯ

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ດຣ. ສິນລະວົງ ຄູດໄພທູນ

<u>ບ່ອນນຳສົ່ງ</u> :

- ນາຍົກ-ຮອງນາຍົກລັດຖະມົນຕີ 05 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການສະພາແຫ່ງຊາດ 01 ສະບັບ
- ຫ້ອງວ່າການປະທານປະເທດ 01 ສະບັບ
- ບັນດາສະມາຊິກລັດຖະບານ ທ່ານລະ 01 ສະບັບ
- ຄະນະ ທລບ 03 ສະບັບ
- ກົມສັງລວມເສດຖະກິດ 01 ສະບັບ
- ເກັບມ້ຽນ 06 ສະບັບ